ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
"ບໍ່ໄດ້ກວດສອບ"

ສຳລັບງວດເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2020

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປຂອງບໍລິສັດ

ຄະນະບໍລິຫານ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ") ໄດ້ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານທາງການເງິນຂອງ ບໍລິສັດສຳລັບໆງວດເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2020

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະເພື່ອນຳສະເໜີຖານະທາງການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານ, ຄະນະບໍລິຫານ ຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະບໍລິຫານມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງດ້ານບັນຊີທີ່ຖືກບັນທຶກໄວ້ໃນໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງ ບໍລິສັດ ໃນມື້ທີ່ປິດບັນຊີພ້ອມທັງຮັບປະກັນວ່າ ເອກະສານລາຍງານການເງິນໄດ້ສອດຄ່ອງກັບນະໂຍບາຍທາງດ້ານບັນຊີທີ່ເໝາະສົມ.ຄະນະບໍລິຫານຍັງມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງ ບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາຄວາມບໍ່ໂປ່ງໃສ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະບໍລິຫານຢັ້ງຢືນວ່າໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນນະວັນທີ 30 ກັນຍາ 2020 ແລະ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວທີ່ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ

ໃນນາມຄະນະບໍລິຫານ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ນາງ ຕຣີລິດວິໄລ

ຜູ້ອຳນວຍການໃຫ່ຍ

26 ຕຸລາ 2020

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2020

ຫົວໜ່ວຍ: ກີບ

	ບົດອະທິບາຍ	ໃນວັນທີ 30 ກັນຍາ 2020 "ບໍ່ໄດ້ກວດສອບ"	ໃນວັນທີ 31 ທັນວາ 2019
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ	4.1	10,510,358,200	11,898,879,158
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ເງິນກູ້ຜ່ອນຊຳລະ ພາຍໃນໜຶ່ງປີ	5	47,683,167,953	49,450,694,223
ຊັບສິນລໍຖ້າການຂາຍ	6	367,331,096	135,778,949
ຊັບສິນໝຸນວຽນອື່ນ	7	358,122,985	371,294,394
ລວມ ຊັບສິນໝຸນວຽນ		58,918,980,234	61,856,646,724
ຊັບສິນບໍ່ໝຸນວຽນ			
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ	8	2,000,002,700	2,000,002,700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	5	23,207,900,144	28,541,865,938
ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ	9	1,130,952,443	1,454,220,193
ຊັບສິນບໍ່ໝຸນວຽນອື່ນ		-	36,126,040
ລວມ ຊັບສິນບໍ່ໝຸນວຽນ		26,338,855,287	32,032,214,871
ລວມ ຊັບສິນ		85,257,835,521	93,888,861,595

ເບິ່ງບົດອະທິບາຍປະກອບເອກະສານລາຍງານການເງິນກາງປີໂດຍຫຍໍ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ໃບລາຍງານຖານະການເງິນ (ຕໍ່)
ໃນວັນທີ 30 ກັນຍາ 2020

ຫົວໜ່ວຍ: ກີບ

	ບົດອະທິບາຍ	ໃນວັນທີ 30 ກັນຍາ 2020 "ບໍ່ໄດ້ກວດສອບ"	ໃນວັນທີ 31 ທັນວາ 2019
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ	10	2,757,691,156	3,704,655,549
ໜີ້ສິນຂອງສັນຍາເຊົ່າທາງການເງິນພາຍໃນໜຶ່ງປີ	11	90,610,054	124,178,788
ໜີ້ຕ້ອງສົ່ງອາກອນລາຍຮັບ		1,706,648,862	2,837,273,979
ໜີ້ສິນໝຸນວຽນອື່ນໆ		43,343,161	29,349,509
ລວມ ໜີ້ສິນໝຸນວຽນ		4,598,293,233	6,695,457,825
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	12	11,858,400,000	-
ເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ	13	-	20,100,000,000
ໜີ້ສິນບໍ່ໝຸນວຽນອື່ນໆ		118,875,000	78,125,000
ລວມ ໜີ້ສິນບໍ່ໝຸນວຽນ		11,977,275,000	20,178,125,000
ລວມ ໜີ້ສິນທັງໝົດ		16,575,568,233	26,873,582,825
ທຶນເຈົ້າຂອງ			
ທຶນ			
ທຶນຈົດທະບຽນ		40,000,000,000	40,000,000,000
ທຶນຈົດທະບຽນທີ່ອອກ ແລະ ຊຳລະແລ້ວ		40,000,000,000	40,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		12,832,667,550	12,832,667,550
ກຳໄລສະສົມ			
ຈັດສັນແລ້ວ - ຄັງສຳຮອງຕາມກົດໝາຍ	14	3,252,194,002	3,252,194,002
ບໍ່ໄດ້ຈັດສັນ		12,597,405,736	10,930,417,218
ລວມ ທຶນເຈົ້າຂອງ		68,682,267,288	67,015,278,770
ລວມ ໜີ້ສິນ ແລະ ທຶນເຈົ້າຂອງ		85,257,835,521	93,888,861,595

ເບິ່ງບົດອະທິບາຍປະກອບເອກະສານລາຍງານການເງິນກາງປີໂດຍຫຍໍ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ໃບລາຍງານຜົນໄດ້ຮັບ
ໃນວັນທີ 30 ກັນຍາ 2020
"ບໍ່ໄດ້ກວດສອບ"

ຫົວໜ່ວຍ: ກີບ

	ບົດອະທິບາຍ	2020	2019
ລາຍຮັບ			
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ			
ແລະ ເງິນກູ້ຜ່ອນຊຳລະ		18,458,404,817	16,934,922,613
ລາຍຮັບອື່ນ		766,280,429	707,559,091
ລວມ ລາຍຮັບ		19,224,685,246	17,642,481,704
ລາຍຈ່າຍ			
ລາຍຈ່າຍໃນການບໍລິຫານ	17	9,350,077,836	7,915,682,395
ໜີ້ສົງໄສຈະສູນ ແລະ ລາຍຈ່າຍໜີ້ສູນ		1,158,637,664	804,405,995
ລາຍຈ່າຍການເງິນ		1,722,976,459	975,615,843
ຂາດທຶນສຸດທິຈາກອັດຕາແລກປ່ຽນ		475,988,155	553,651,364
ລວມ ລາຍຈ່າຍ		12,707,680,114	10,249,355,597
ກຳໄລກ່ອນອາກອນລາຍຮັບ		6,517,005,132	7,393,126,107
ລາຍຈ່າຍອາກອນລາຍຮັບ	18	(850,016,614)	(1,744,733,503)
ກຳໄລສຸດທິ		5,666,988,518	5,648,392,604
ກຳໄລຕໍ່ຮຸ້ນຂັ້ນພື້ນຖານ (ກີບ)	15	142	141

ເບິ່ງບົດອະທິບາຍປະກອບເອກະສານລາຍງານການເງິນກາງປີໂດຍຫຍໍ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ໃນວັນທີ 30 ກັນຍາ 2020
"ບໍ່ໄດ້ກວດສອບ"

ຫົວໜ່ວຍ: ກີບ

	ບົດອະທິບາຍ	ມູນຄ່າຮຸ້ນ ທີ່ໄດ້ຊຳລະແລ້ວ	ສ່ວນເພີ່ມມູນຄ່າຮຸ້ນ	ກຳໄລສະສົມ		ລວມ ທຶນເຈົ້າຂອງ
				ຈັດສັນແລ້ວ ຄັ່ງສຳຮອງ ຕາມກົດໝາຍ	ບໍ່ໄດ້ຈັດສັນ	
ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2019						
ຍອດຍົກມາ ໃນວັນທີ 1 ມັງກອນ 2019		40,000,000,000	12,832,667,550	2,443,735,507	9,534,290,762	64,810,693,821
ກຳໄລສຳລັບງວດ		-	-	-	5,648,392,604	5,648,392,604
ຈ່າຍເງິນປັນຜົນ	16	-	-	-	(5,880,000,000)	(5,880,000,000)
ຍອດເຫຼືອໃນວັນທີ 30 ກັນຍາ 2019		40,000,000,000	12,832,667,550	2,443,735,507	9,302,683,366	64,579,086,425
ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2020						
ຍອດຍົກມາ ໃນວັນທີ 1 ມັງກອນ 2020		40,000,000,000	12,832,667,550	3,252,194,002	10,930,417,218	67,015,278,770
ກຳໄລສຳລັບງວດ		-	-	-	5,666,988,518	5,666,988,518
ຈ່າຍເງິນປັນຜົນ	16	-	-	-	(4,000,000,000)	(4,000,000,000)
ຍອດເຫຼືອໃນວັນທີ 30 ກັນຍາ 2020		40,000,000,000	12,832,667,550	3,252,194,002	12,597,405,736	68,682,267,288

ເບິ່ງບົດອະທິບາຍປະກອບເອກະສານລາຍງານການເງິນກາງປີໂດຍຫຍໍ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ໃບລາຍງານກະແສເງິນສົດ
ໃນວັນທີ 30 ກັນຍາ 2020
"ບໍ່ໄດ້ກວດສອບ"

ຫົວໜ່ວຍ: ກີບ

	ບົດອະທິບາຍ	2020	2019
ກະແສເງິນສົດຈາກກິດຈະກຳດຳເນີນງານ			
ກຳໄລກ່ອນລາຍຈ່າຍອາກອນລາຍໄດ້		6,517,005,132	7,393,126,107
ລາຍການປັບປຸງ:			
ໜີ້ສູນ ແລະ ໜີ້ສົງໄສຈະສູນ		1,158,637,664	804,405,995
ຫັກທົດແທນຄ່ານາຍໜ້າລໍຖ້າຕັດບັນຊີ	4.2	3,176,307,122	2,862,641,173
ຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນລໍຖ້າການຂາຍ		22,500,000	11,250,000
ຄ່າຫຼ້ຍຫ້ຽນ		397,581,007	352,660,050
ລາຍຈ່າຍການເງິນ		1,722,976,459	975,615,843
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ		410,873,160	1,204,734,804
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງ ໃນຊັບສິນດຳເນີນງານ ແລະ ໜີ້ສິນ		13,405,880,544	13,604,433,972
ການປ່ຽນແປງໃນຊັບສິນ ແລະ ໜີ້ສິນດຳເນີນງານ			
ເພີ່ມຂອງລູກໜີ້ຈາກສັນຍາເຊົ່າການເງິນ ແລະ ລູກໜີ້ຈາກເງິນກູ້ຜ່ອນຊຳລະ		2,622,922,119	(11,467,314,328)
ເພີ່ມຂອງຊັບສິນລໍຖ້າການຂາຍ		(254,052,147)	(115,964,284)
ຫຼຸດ (ເພີ່ມ) ຂອງຊັບສິນໝຸນວຽນອື່ນໆ		49,297,450	(14,979,455)
ເພີ່ມ ຂອງໜີ້ຕ້ອງສົ່ງໃນການທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ		(622,718,293)	1,281,136,456
ເພີ່ມ ຂອງໜີ້ສິນຂອງສັນຍາເຊົ່າທາງການເງິນ		(33,568,735)	(27,874,831)
ເພີ່ມ ຂອງໜີ້ສິນໝຸນວຽນອື່ນໆ		13,993,652	9,217,420
ເພີ່ມ ຂອງໜີ້ສິນບໍ່ໝຸນວຽນອື່ນໆ		40,750,000	16,500,000
ເງິນສົດຮັບ (ຈ່າຍ) ຈາກການດຳເນີນງານ		15,222,504,590	3,285,154,950
ເງິນສົດຈ່າຍຄ່າດອກເບ້ຍ		(1,901,070,559)	(815,404,357)
ເງິນສົດຈ່າຍຄ່າອາກອນລາຍຮັບ		(1,980,641,732)	(1,110,296,196)
ເງິນສົດສຸດທິໄດ້ມາຈາກກິດຈະກຳດຳເນີນງານ		11,340,792,299	1,359,454,397

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2020
"ບໍ່ໄດ້ກວດສອບ"

ຫົວໜ່ວຍ: ກີບ

	ບົດອະທິບາຍ	2020	2019
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ	9	(74,313,257)	(542,738,453)
ເງິນສົດສຸດທິໃຊ້ໄປໃນ ກິດຈະກຳການລົງທຶນ		(74,313,257)	(542,738,453)
ກະແສເງິນສົດຈາກກິດຈະກຳທາງການເງິນ			
ເງິນສົດໄດ້ຮັບຈາກການກູ້ຢືມໄລຍະຍາວຈາກສະຖາບັນການເງິນ		14,433,600,000	-
ເງິນສົດໄດ້ຮັບຈາກການກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ		-	19,360,000,000
ເງິນສົດໄດ້ຈ່າຍຈາກການກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ		(23,088,600,000)	(2,475,000,000)
ເງິນສົດໄດ້ຈ່າຍເງິນປັນຜົນ		(4,000,000,000)	(5,880,000,000)
ເງິນສົດສຸດທິ (ໃຊ້ໄປໃນ) ໄດ້ມາຈາກກິດຈະກຳທາງການເງິນ		(12,655,000,000)	11,005,000,000
(ຫຼຸດລົງ) ເພີ່ມຂຶ້ນສຸດທິໃນເງິນສົດ ແລະ ສິ່ງທຽບເທົ່າເງິນສົດ		(1,388,520,958)	11,821,715,944
ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ໃນວັນທີ 1 ມັງກອນ		11,898,879,158	6,159,987,949
ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ໃນວັນທີ 30 ກັນຍາ	4.1	10,510,358,200	17,981,703,893

ເບິ່ງບົດອະທິບາຍປະກອບເອກະສານລາຍງານການເງິນກາງປີໂດຍຫຍໍ້

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນການປີໂດຍຫຍໍ້
ສຳລັບງວດເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2020
"ບໍ່ໄດ້ກວດສອບ"

1. ຂໍ້ມູນທົ່ວໄປ ແລະ ການດຳເນີນທຸລະກິດຂອງບໍລິສັດ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ. ສຳນັກງານ ຕັ້ງຢູ່ເຮືອນເລກທີ 628, ບ້ານ ໂພນພະເນົາ, ຫຼັກ 5, ຖະໜົນໄກສອນ ພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ການດຳເນີນທຸລະກິດຫຼັກຂອງບໍລິສັດ ແມ່ນ ການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນ ເພື່ອຊື້ລົດຈັກ ແລະ ລົດໄຖ.

ບໍລິສັດໄດ້ສ້າງຕັ້ງຂຶ້ນໃນວັນທີ 2 ກັນຍາ 2011 ໂດຍໄດ້ຮັບໃບທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ. ບໍລິສັດເລີ່ມດຳເນີນທຸລະກິດຫຼັງຈາກໄດ້ຮັບໃບອະນຸຍາດດຳເນີນທຸລະກິດເຊົ່າສິນເຊື່ອ ທີ່ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ("ທຫລ") ລົງວັນທີ 11 ມິຖຸນາ 2012. ໃນວັນທີ 20 ພະຈິກ 2017 ບໍລິສັດໄດ້ປ່ຽນຮູບແບບຂອງ ວິສາຫະກິດ ຈາກບໍລິສັດຈຳກັດມາເປັນບໍລິສັດມະຫາຊົນ ແລະ ປ່ຽນຊື່ບໍລິສັດຈາກບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ຈຳກັດ ມາເປັນບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ.

ໃນວັນທີ 13 ມິຖຸນາ 2018, ບໍລິສັດຖືກອະນຸມັດໃນການຈຳໜ່າຍຮຸ້ນຄັ້ງທຳອິດໃຫ້ແກ່ສາທາລະນະໂດຍຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍໃຊ້ຊື່ຫຍໍ້ວ່າ MHTL.

ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດຄື ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ ຊຶ່ງຈົດທະບຽນໃນປະເທດໄທ.

ການແຜ່ລະບາດຂອງເຊື້ອພະຍາດໂຄໂຣນ່າ 2019

ການແຜ່ລະບາດຂອງເຊື້ອພະຍາດໂຄໂຣນ່າ 2019 ("ໂຄວິດ-19") ເລີ່ມຕົ້ງແຕ່ຕົ້ນປີ 2020 ໃນສປປ ລາວ ຊຶ່ງໄດ້ຮັບຜົນກະທົບຢ່າງຊັດເຈນຕໍ່ພາວະເສດຖະກິດຂອງສປປ ລາວ ແລະ ເສດຖະກິດໂລກໂດຍລວມ ລວມເຖິງພະນັກງານ, ລູກຄ້າ, ຮຸ້ນສ່ວນທຸລະກິດ ແລະ ການດຳເນີນທຸລະກິດບໍລິສັດ.

ເພື່ອຫຼຸດຜ່ອນຜົນກະທົບດັ່ງກ່າວ ບໍລິສັດໄດ້ພິຈາລະນາໃຫ້ຄວາມຊ່ວຍເຫຼືອແກ່ລູກຄ້າຂອງບໍລິສັດ ຕາມມາດຕະການຊ່ວຍເຫຼືອດ້ານສິນເຊື່ອສຳຫຼັບລູກຄ້າທີ່ໄດ້ຮັບຜົນກະທົບຈາກ ໂຄວິດ-19 ຊຶ່ງສອດຄ້ອງກັບມາດຕະການເພື່ອຊ່ວຍເຫຼືອລູກໜີ້ທີ່ໄດ້ຮັບຜົນກະທົບຈາກສະຖານະການທີ່ສົ່ງຜົນກະທົບຕໍ່ເສດຖະກິດລາວຂອງທະນາຄານແຫ່ງ ສປປ ລາວ ໂດຍໃຫ້ພັກການຊຳລະເງິນຕົ້ນ ແລະ ດອກເບ້ຍ ແລະ ຫຼຸດອັດຕາດອກເບ້ຍ ແລະ ໄລຍະເວລາທີ່ກຳນົດໂດຍບໍລິສັດ.

ຢ່າງໃດກໍຕາມ ຝ່າຍບໍລິຫານຂອງບໍລິສັດຈະຕິດຕາມຄວາມຄືບໜ້າຂອງສະຖານະການດັ່ງກ່າວຢ່າງຕໍ່ເນື່ອງ ແລະ ຈະປະເມີນຜົນກະທົບທາງການເງິນກ່ຽວກັບມູນຄ່າຂອງຊັບສິນ ປະມານການໜີ້ສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນຢ່າງສະໝ່ຳສະເໝີ.

2. ພື້ນຖານໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນກາງປີ

2.1 ບໍລິສັດນຳໃຊ້ສະກຸນເງິນລາວກີບ "ກີບ" ໃນການບັນທຶກບັນຊີ ແລະ ເອກະສານລາຍງານການເງິນກາງປີ ຖືກກະກຽມຂຶ້ນຕາມຫຼັກການບັນຊີ. ບໍລິສັດໄດ້ນຳສະເໜີເອກະສານລາຍງານການເງິນກາງປີ ໂດຍໃຊ້ນະໂຍບາຍດັ່ງຕໍ່ໄປນີ້ ແລະ ນະໂຍບາຍບັນຊີທີ່ໄດ້ເປີດເຜີຍໄວ້ໃນ ບົດອະທິບາຍຂໍ້ 3 ຂອງເອກະສານລາຍງານການເງິນກາງປີເຊັ່ນ:

- ໃນລາຍງານຖານະການເງິນໃນຕອນທ້າຍປີຂອງໄລຍະເວລາລາຍງານກາງປີປັດຈຸບັນ ແລະ ໃນລາຍງານຖານະການເງິນທີ່ໃຊ້ປຽບທຽບໃນຕອນທ້າຍປີບັນຊີຫຼ້າສຸດທີ່ຜ່ານມາ.
- ໃນລາຍງານຜົນໄດ້ຮັບສະສົມຮອດປີປັດຈຸບັນ, ກັບໃນລາຍງານຜົນໄດ້ຮັບທີ່ປຽບທຽບກັນໄດ້ຂອງບັນຊີກ່ອນໜ້າ.
- ໃນລາຍງານປ່ຽນແປງທຶນເຈົ້າຂອງສະສົມຮອດປີບັນຊີປັດຈຸບັນ, ກັບໃນລາຍງານສ່ວນປ່ຽນແປງທຶນເຈົ້າຂອງທີ່ປຽບທຽບກັນໄດ້ຍອດສະສົມໝົດປີຂອງບັນຊີກ່ອນໜ້າ.
- ໃນລາຍງານກະແສເງິນສົດສະສົມຮອດປີປັດຈຸບັນ, ກັບໃນລາຍງານກະແສເງິນສົດທີ່ປຽບທຽບກັນໄດ້ຍອດສະສົມໝົດປີຂອງບັນຊີກ່ອນໜ້າ.

2.2 ໃນລາຍງານຖານະການເງິນ ໃນວັນທີ 31 ທັນວາ 2019 ທີ່ນຳມາສະແດງປຽບທຽບ ໄດ້ມາຈາກເອກະສານລາຍງານການເງິນຂອງບໍລິສັດເຊິ່ງໄດ້ກວດສອບແລ້ວ. ໃນລາຍງານຜົນໄດ້ຮັບ, ໃນລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃນລາຍງານກະແສເງິນສົດສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2020 ທີ່ນຳມາສະແດງປຽບທຽບນີ້ ຍັງບໍ່ທັນໄດ້ກວດສອບ.

2.3 ນະໂຍບາຍການບັນຊີຂອງບໍລິສັດທີ່ນຳໃຊ້ແມ່ນມີຄວາມແຕກຕ່າງຈາກມາດຕະຖານສາກົນດ້ານການລາຍງານການເງິນ ("IFRSs"). ສະນັ້ນ, ເອກະສານລາຍງານການເງິນກາງປີນີ້ ບໍ່ໄດ້ສະແດງເຖິງຖານະການເງິນ, ຜົນການດຳເນີນງານດ້ານການເງິນ ແລະ ກະແສເງິນສົດທີ່ສອດຄ່ອງກັບ ມາດຕະຖານສາກົນດ້ານການລາຍງານການເງິນ ("IFRSs").

2.4 ຜົນການດຳເນີນງານທີ່ບໍ່ທັນໄດ້ກວດສອບທີ່ນຳສະເໜີໃນງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2020 ບໍ່ແມ່ນເຄື່ອງຊີ້ບອກ ຫຼື ເປັນການຄາດຄະເນກ່ຽວກັບຜົນການດຳເນີນງານໝົດປີ.

2.5 ເອກະສານລາຍງານການເງິນກາງປີສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2020 ຄວນອ່ານປະກອບກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2019 ເຊິ່ງໄດ້ມີການກວດສອບແລ້ວ.

2.6 ເອກະສານລາຍງານການເງິນກາງປີ ໄດ້ຖືກກະກຽມພາຍໃຕ້ພື້ນຖານການຕີມູນຄ່າຂອງມູນຄ່າຕົ້ນທຶນເດີມ ຍົກເວັ້ນທີ່ໄດ້ເປີດເຜີຍໄວ້ໃນນະໂຍບາຍບັນຊີທີ່ສຳຄັນ.

3. ນະໂຍບາຍການບັນຊີທີ່ສຳຄັນ

ເອກະສານລາຍງານການເງິນກາງປີ ຖືກກະກຽມຂຶ້ນຕາມນະໂຍບາຍການບັນຊີຂອງບໍລິສັດ ເຊິ່ງສອດຄ່ອງກັບນະໂຍບາຍການບັນຊີທີ່ໃຊ້ກະກຽມເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2019.

4. ການເປີດເຜີຍຂໍ້ມູນເພີ່ມເຕີມກ່ຽວກັບກະແສເງິນສົດ

4.1 ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ປະກອບມີດັ່ງນີ້:

	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ເງິນສົດໃນກຳມື	86,089,960	150,242,900
ເງິນຝາກທະນາຄານ	10,424,268,240	11,748,636,258
	10,510,358,200	11,898,879,158

4.2 ລາຍການທີ່ບໍ່ແມ່ນເງິນສົດຈາກຕົ້ນທຶນທາງກົງເລີ່ມຕົ້ນຂອງລູກໜີ້ຈາກສັນຍາເຊົ່າການເງິນ ແລະ ລູກໜີ້ຈາກເງິນກູ້ ຜ່ອນຊຳລະ ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ ປະກອບມີດັ່ງນີ້:

	2020 ກີບ	2019 ກີບ
ຍອດຍົກມາຕົ້ນທຶນທາງກົງເບື້ອງຕົ້ນ ໃນວັນທີ 1 ມັງກອນ	3,032,978,952	2,449,710,655
ບວກ ເພີ່ມຂຶ້ນລະຫວ່າງງວດ	2,609,700,000	3,135,650,000
ລົບ ລາຍຈ່າຍຈາກການຫັກຄ່ານາຍໜ້າລໍຖ້າຕັດບັນຊີ	(3,176,307,122)	(2,862,641,173)
ຍອດຍົກໄປຕົ້ນທຶນທາງກົງເບື້ອງຕົ້ນ ໃນວັນທີ 30 ກັນຍາ,	2,466,371,830	2,722,719,482

5. ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ

ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ປະກອບມີດັ່ງຕໍ່ໄປນີ້:

	ໃນວັນທີ 30 ກັນຍາ 2020		
	ບໍ່ເກີນ 1 ປີ ກີບ	ເກີນ 1 ປີ ເຖິງ 5 ປີ ກີບ	ລວມ ກີບ
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	2,250,816,784	290,352,000	2,541,168,784
ລົບ ດອກເບ້ຍລໍຖ້າຮັບ	(592,466,874)	(58,198,146)	(650,665,020)
	1,658,349,910	232,153,854	1,890,503,764
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	13,773,452	8,688,799	22,462,251
	1,672,123,362	240,842,653	1,912,966,015
ລົບ ຄ່າສຳຮອງໜີ້ສົງໄສຈະສູນ	(935,417,184)	(14,230,458)	(949,647,642)
ລວມໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	736,706,178	226,612,195	963,318,373
ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ			
ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	66,156,486,351	28,521,896,000	94,678,382,351
ລົບ ດອກເບ້ຍລໍຖ້າຮັບ	(18,266,376,691)	(6,072,870,866)	(24,339,247,557)
	47,890,109,660	22,449,025,134	70,339,134,794
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	1,433,577,112	1,010,332,468	2,443,909,579
	49,323,686,772	23,459,357,604	72,783,044,373
ລົບ ຄ່າສຳຮອງໜີ້ສົງໄສຈະສູນ	(2,377,224,997)	(478,069,653)	(2,855,294,649)
ລວມໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	46,946,461,775	22,981,287,949	69,927,749,724
ລວມ	**47,683,167,953**	**23,207,900,144**	**70,891,068,097**

	ໃນວັນທີ 31 ທັນວາ 2019		
	ບໍ່ເກີນ 1 ປີ ກີບ	ເກີນ 1 ປີ ເຖິງ 5 ປີ ກີບ	ລວມ ກີບ
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	2,800,331,380	679,225,000	3,479,556,380
ລົບ ດອກເບ້ຍລໍຖ້າຮັບ	(788,617,386)	(138,546,919)	(927,164,305)
	2,011,713,994	540,678,081	2,552,392,075
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	24,684,571	21,100,414	45,784,985
	2,036,398,565	561,778,495	2,598,177,060
ລົບ ຄ່າສຳຮອງໜີ້ສົງໄສຈະສູນ	(871,743,566)	(15,366,272)	(887,109,838)
ລວມໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	1,164,654,999	546,412,223	1,711,067,222
ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ			
ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	68,306,465,814	34,924,209,000	103,230,674,814
ລົບ ດອກເບ້ຍລໍຖ້າຮັບ	(20,360,648,686)	(7,823,064,177)	(28,183,712,863)
	47,945,817,128	27,101,144,823	75,046,961,951
ບວກ ຕົ້ນທຶນທາງກົງເລີ່ມຕົ້ນ	1,684,264,787	1,302,929,181	2,987,193,968
	49,630,081,915	28,404,074,004	78,034,155,919
ລົບ ຄ່າສຳຮອງໜີ້ສົງໄສຈະສູນ	(1,344,042,691)	(408,620,289)	(1,752,662,980)
ລວມໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	48,286,039,224	27,995,453,715	76,281,492,939
ລວມ	**49,450,694,223**	**28,541,865,938**	**77,992,560,161**

ຍອດເຫຼືອຂອງໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019, ຈັດປະເພດຕາມອາຍຸຂອງຈຳນວນເດືອນມີດັ່ງລຸ່ມນີ້:

	ໃນວັນທີ 30 ກັນຍາ 2020	ໃນວັນທີ 31 ທັນວາ 2019
	ໜີ້ຕ້ອງຮັບຈາກສັນຍາເຊົ່າ ທາງການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ ຜ່ອນຊຳລະ ສຸດທິຈາກ ດອກເບ້ຍລໍຖ້າຮັບ ກີບ	**ໜີ້ຕ້ອງຮັບຈາກສັນຍາເຊົ່າ ທາງການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ ຜ່ອນຊຳລະ ສຸດທິຈາກ ດອກເບ້ຍລໍຖ້າຮັບ ກີບ**
ຍັງບໍ່ຮອດກຳນົດ	50,249,858,421	61,212,855,428
ເກີນກຳນົດ 1 - 3 ເດືອນ	17,020,738,458	13,268,021,709
ເກີນກຳນົດ 4 - 5 ເດືອນ	1,383,636,091	653,924,905
ເກີນກຳນົດ 6 - 12 ເດືອນ	1,198,494,286	1,033,085,847
ເກີນກຳນົດຫຼາຍກວ່າ 12 ເດືອນ	2,376,911,302	1,431,466,137
ລວມ	72,229,638,558	77,599,354,026
ຄ່າສຳຮອງ ໜີ້ສົງໄສຈະສູນ	3,804,942,292	2,639,772,818

ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2020 ແລະ 2019 ລາຍຈ່າຍໜີ້ສູນ ຖືກບັນທຶກໃນໃບລາຍງານຜົນໄດ້ຮັບ ຈຳນວນ 51.21 ລ້ານກີບ. (2020: ບໍ່ມີ)

6. ຊັບສິນລໍຖ້າການຂາຍ

ຊັບສິນລໍຖ້າການຂາຍ ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ປະກອບມີດັ່ງຕໍ່ໄປນີ້:

	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ຊັບສິນລໍຖ້າການຂາຍ - ລິດຈັກ	406,081,096	152,028,949
ລົບ ສ່ວນຫຼຸດມູນຄ່າຂອງຊັບສິນ	(38,750,000)	(16,250,000)
	367,331,096	135,778,949

7. ຊັບສິນໝຸນວຽນອື່ນ

ຊັບສິນໝຸນວຽນອື່ນ ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ປະກອບມີດັ່ງຕໍ່ໄປນີ້:

	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ລາຍຈ່າຍຈ່າຍລ່ວງໜ້າ	236,034,145	311,989,334
ເງິນຈ່າຍລ່ວງໜ້າ	2,141,020	2,080,520
ອື່ນໆ	119,947,820	57,224,540
	358,122,985	371,294,394

8. ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ

ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019, ບໍລິສັດໄດ້ມີເງິນແຮຝາກບັງຄັບທີ່ທະນາຄານແຫ່ງ ສປປ ລາວ ("ທຫລ") ຈຳນວນ 2,000 ລ້ານກີບ ໂດຍຄິດເປັນ 5% ຂອງທຶນຈົດທະບຽນທັງໝົດ. ເງິນສິດດັ່ງກ່າວບໍ່ສາມາດເອົາມາ ນຳໃຊ້ໃນການດຳເນີນງານປະຈຳວັນ. ເຊິ່ງເງິນສິດດັ່ງກ່າວຈະຖືກສົ່ງຄືນໄດ້ຖ້າບໍລິສັດມີການຍຸບເລີກກິດຈະການ.

9. ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ

ສ່ວນປັບປຸງອາຄານເຊົ່າ ແລະ ອຸປະກອນ ປະກອບມີດັ່ງຕໍ່ໄປນີ້:

	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ມູນຄ່າຕາມບັນຊີ ໃນວັນທີ 1 ມັງກອນ,	1,454,220,193	1,236,091,653
ຊື້ເພີ່ມລະຫວ່າງງວດ/ປີ	74,313,257	702,092,568
ຄ່າຫຼ້ຍຫ້ຽນ ພາຍໃນງວດ/ປີ	(397,581,007)	(483,964,028)
ມູນຄ່າສຸດທິຕາມບັນຊີ ໃນວັນສິ້ນສຸດຂອງງວດ/ປີ	1,130,952,443	1,454,220,193

10. ໜີ້ຕ້ອງສິ່ງໃນການທຸລະກິດ ແລະ ໜີ້ຕ້ອງສິ່ງອື່ນໆ

ໜີ້ຕ້ອງສິ່ງໃນການທຸລະກິດ ແລະ ໜີ້ຕ້ອງສິ່ງອື່ນໆ ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ປະກອບມີດັ່ງນີ້:

	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ໜີ້ຕ້ອງສິ່ງໃນການທຸລະກິດ - ພາກສ່ວນທີ່ກ່ຽວຂ້ອງ	110,558,000	203,158,000
ໜີ້ຕ້ອງສິ່ງໃນການທຸລະກິດ - ພາກສ່ວນອື່ນ	1,355,749,000	2,255,247,000
ໜີ້ຕ້ອງສິ່ງອື່ນໆໃນການທຸລະກິດ - ພາກສ່ວນທີ່ກ່ຽວຂ້ອງ	17,240,000	9,918,000
ອາກອນຕ້ອງສິ່ງອື່ນໆ	97,495,592	69,054,416
ຄ່າໃຊ້ຈ່າຍຄ້າງຈ່າຍ	1,176,648,564	1,167,278,133
	2,757,691,156	3,704,655,549

11. ໜີ້ສິນຂອງສັນຍາເຊົ່າທາງການເງິນ

ບໍລິສັດ ຫັນມານຳໃຊ້ສັນຍາເຊົ່າທາງການເງິນຂອງຍານພາຫະນະ. ລາຍຈ່າຍສັນຍາເຊົ່າຂັ້ນຕ່ຳທີ່ຕ້ອງຈ່າຍ ແລະ ມູນຄ່າປັດຈຸບັນ ຂອງໜີ້ສິນຂອງສັນຍາເຊົ່າທາງການເງິນ ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ໄດ້ສະຫຼຸບໄວ້ດັ່ງນີ້:

	ລາຍຈ່າຍສັນຍາເຊົ່າຂັ້ນຕ່ຳ		ມູນຄ່າປັດຈຸບັນຂັ້ນຕ່ຳ ລາຍຈ່າຍສັນຍາເຊົ່າ	
	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ພາຍໃນ 1 ປີ	90,995,113	128,961,814	90,995,113	128,961,814
ລົບ ດອກເບ້ຍລໍຖ້າສະສາງ			(385,059)	(4,783,026)
			90,610,054	124,178,788

12. ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ

ໃນວັນທີ 30 ມິຖຸນາ 2020, ບໍລິສັດໄດ້ມີເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ 1.50 ລ້ານໂດລາສະຫະລັດ (ທຽບເທົ່າ 14,538 ລ້ານກີບ), ເຊິ່ງຖືອັດຕາດອກເບ້ຍຂອງອັດຕາເງິນຝາກເປັນເງິນຕາຕ່າງປະເທດບວກ 1.20% ຕໍ່ປີ, ເຊິ່ງໄດ້ຮັບການຄ້ຳປະກັນຈາກບໍລິສັດແມ່ ແລະ ຈະຮອດກຳນົດພາຍໃນ 3 ປີ ນັບແຕ່ວັນເບີກຖອນເງິນກູ້ຢືມ (2019: ບໍ່ມີ).

13. ເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ

ເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ປະກອບມີດັ່ງນີ້:

	ອັດຕາດອກເບ້ຍຕໍ່	ຍອດໃນວັນທີ			
	ສັນຍາເງິນກູ້	30 ກັນຍາ 2020		31 ທັນວາ 2019	
	% ຕໍ່ປີ	ບາດ	ກີບ	ບາດ	ກີບ
ເງິນກູ້ຢືມໄລຍະຍາວ	11.12% - 13.75%	-	-	67,000,000	20,100,000,000

ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019, ເງິນກູ້ຢືມໄລຍະຍາວຈາກພາກສ່ວນທີ່ກ່ຽວຂ້ອງ ສະແດງເຖິງເງິນກູ້ຢືມສະກຸນເງິນບາດທີ່ບໍ່ມີຫຼັກຊັບຄ້ຳປະກັນ ເຊິ່ງຖືກຊຳລະຄືນໃນວັນທີຄົບກຳນົດບໍ່ເກີນ 3 ປີ.

14. ຄັງສຳຮອງຕາມກົດໝາຍ

ຕາມມາດຕາ 156 ແລະ 157 ຂອງກົດໝາຍວ່າດ້ວຍວິສາຫະກິດແຫ່ງ ສປປລາວ ບໍລິສັດຈຳກັດຕ້ອງຫັກ ສິບສ່ວນຮ້ອຍຂອງ ກຳໄລສຸດທິພາຍຫຼັງໄດ້ຫັກເງິນຂາດທຶນເພື່ອສ້າງຄັງສຳຮອງໄວ້ແຕ່ລະປີ. ເມື່ອຄັງສຳຮອງນີ້ມີເງິນສະສົມໄດ້ເຄິ່ງ ໜຶ່ງຂອງທຶນຈົດທະບຽນຂອງບໍລິສັດຈຳກັດແລ້ວ ບໍລິສັດຈຳກັດສາມາດໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ. ເວັ້ນເສຍແຕ່ກົດລະບຽບຂອງບໍລິສັດຈຳກັດໄດ້ກຳນົດໄວ້ຢ່າງອື່ນ. ຄັງສຳຮອງຕາມລະບຽບການຕ້ອງນຳໃຊ້ສະເພາະ ແຕ່ການຈ່າຍຖົມຂຸມຂາດທຶນຂອງບໍລິສັດເທົ່ານັ້ນ.

ຕາມມາດຕາ 195 ທີ່ໄດ້ລະບຸວ່າຕາມມາດຕາ 156 ແລະ 157 ໃຊ້ໄດ້ສະເພາະບໍລິສັດມະຫາຊົນ.

15. ກຳໄລຕໍ່ຮຸ້ນຂັ້ນພື້ນຖານ

ສຳລັບງວດເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2020 ແລະ 2019, ບໍລິສັດໄດ້ຄິດໄລ່ ຈຳນວນຮຸ້ນສາມັນສະເລ່ຍ ຕາມນ້ຳໜັກ ແລະກຳໄລຕໍ່ຮຸ້ນ ມີດັ່ງນີ້:

ຈຳນວນຮຸ້ນສາມັນສະເລ່ຍຕາມນ້ຳໜັກ	2020 ກີບ	2019 ກີບ
ສຳຫຼັບງວດ 9 ເດືອນ ສິ້ນສຸດວັນທີ 30 ກັນຍາ, (ຮຸ້ນ)	40,000,000	40,000,000
ກຳໄລສຸດທິ ສຳຫຼັບ 9 ເດືອນ ສິ້ນສຸດວັນທີ 30 ກັນຍາ, (ກີບ)	5,666,988,518	5,648,392,604
ກຳໄລຕໍ່ຮຸ້ນ ຂັ້ນພື້ນຖານ (ກີບ)	142	141

16. ເງິນປັນຜົນ

ໃນວັນທີ 26 ເມສາ 2019 ກອງປະຊຸມວິສາມັນຜູ້ຖືຮຸ້ນໄດ້ລົງມະຕິໃນການຈ່າຍເງິນປັນຜົນ ຈາກກຳໄລສຸດທິປີ 2018 ໃຫ້ແກ່ຜູ້ຖືຮຸ້ນຈຳນວນ 5,880 ລ້ານກີບ. ເງິນປັນຜົນນີ້ໄດ້ຈ່າຍແລ້ວໃນເດືອນ ພຶດສະພາ 2019.

ໃນວັນທີ 29 ພຶດສະພາ 2020 ກອງປະຊຸມວິສາມັນຜູ້ຖືຮຸ້ນໄດ້ລົງມະຕິໃນການຈ່າຍເງິນປັນຜົນ ຈາກກຳໄລສຸດທິປີ 2019 ໃຫ້ແກ່ ຜູ້ຖືຮຸ້ນຈຳນວນ 4,000 ລ້ານກີບ. ເງິນປັນຜົນນີ້ໄດ້ຈ່າຍແລ້ວໃນເດືອນ ມິຖຸນາ 2020.

17. ລາຍຮັບອື່ນ

ລາຍຮັບອື່ນ ສຳລັບງວດເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ ປະກອບມີດັ່ງນີ້:

	2020 ກີບ	2019 ກີບ
ລາຍຮັບຈາກຄ່າປັບໄໝ - ລູກຄ້າ	620,608,212	542,298,137
ອື່ນໆ	145,672,217	165,260,954
	766,280,429	707,559,091

18. ລາຍຈ່າຍໃນການບໍລິຫານ

ລາຍຈ່າຍໃນການບໍລິຫານ ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ ປະກອບມີດັ່ງນີ້:

	2020 ກີບ	2019 ກີບ
ລາຍຈ່າຍພະນັກງານ	5,638,547,227	4,598,281,530
ຄ່າຕອບແທນຂອງຜູ້ບໍລິຫານ	598,880,856	633,563,451
ລາຍຈ່າຍສາທາລະນຸປະໂພກ	395,598,521	308,003,934
ລາຍຈ່າຍການຕະຫຼາດ	91,872,000	360,430,000
ຂາດທຶນສຸດທິຈາກການຂາຍຊັບສິນລໍຖ້າການຂາຍ	976,964,543	624,787,597
ຄ່າຕອບແທນຜູ້ຊ່ຽວຊານ	476,842,427	223,652,980
ຄ່າຫຼ້ຍຫ້ຽນ	397,581,007	352,660,050
ລາຍຈ່າຍຄ່າຮັບແຂກ	34,212,100	63,266,075
ຄ່າເຄື່ອງໃຊ້ຫ້ອງການ	126,056,172	131,581,303
ອື່ນໆ	613,522,983	619,455,475
	9,350,077,836	7,915,682,395

19. ລະບົບອາກອນ

ລະບົບອາກອນໃນ ສປປ ລາວ ມີລັກສະນະຫຼາກຫຼາຍ ແລະ ໄດ້ນຳມາຕີຄວາມໝາຍ. ສ່ວນຫຼາຍ ການຕີຄວາມໝາຍແມ່ນ ມີຄວາມແຕກຕ່າງກັນລະຫວ່າງເຈົ້າໜ້າທີ່ ແລະ ເຂດພື້ນທີ່ອາກອນແຕ່ລະບ່ອນ. ນອກນັ້ນ ວຽກງານອາກອນຖືກນຳມາທົບທວນ ແລະ ກວດສອບໂດຍເຈົ້າໜ້າທີ່ອາກອນຜູ້ທີ່ໄດ້ຮັບອະນຸຍາດໃຫ້ ກຳນົດການປັບໄໝຕາມກົດໝາຍຢ່າງເຄັ່ງຄັດ, ການລົງໂທດ ແລະ ຄິດໄລ່ດອກເບ້ຍປັບໄໝ.

ບໍລິສັດ ໄດ້ຮັບສິດທິປະໂຫຍດພາຍໃຕ້ກົດໝາຍອາກອນຂອງ ສປປ ລາວ ໂດຍການຫຼຸດອັດຕາອາກອນລາຍໄດ້ອີກ 5% ຈາກອັດຕາປົກກະຕິເປັນໄລຍະເວລາ 4 ປີ ນັບແຕ່ມື້ຈົດທະບຽນໃນຕະຫຼາດຫຼັກຊັບ.

ໃນວັນທີ 11 ກຸມພາ 2020, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 0424/ກຊງ ກ່ຽວກັບການບັງຄັບໃຊ້ ກົດໝາຍ ວ່າດ້ວຍສ່ວຍສາອາກອນສະບັບໃຫມ່ ສະບັບເລກທີ 67/ສພຊ ລົງວັນທີ 18 ກັນຍາ 2019 ມີຜົນນຳໃຊ້ຕັ້ງແຕ່ ວັນທີ 1 ມັງກອນ 2020 ເປັນຕົ້ນໄປ. ພາຍໃຕ້ກົດໝາຍສະບັບໃຫມ່,ມາດຕາທີ 16, ຂໍ້ທີ 2, ວັກທີ 3 ໄດ້ລະບຸວ່າອັດຕານຳໄລຂອງ ບໍລິສັດທີ່ຈົດທະບຽນຕະຫລາດຫລັກຊັບລາວແມ່ນ 13% ເປັນໄລຍະເວລາ 4 ປີ ນັບແຕ່ວັນທີ່ຈົດທະບຽນເຂົ້າຕະຫລາດຫລັກຊັບລາວ.

20. ລາຍການກັບພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດມີລາຍການເຄື່ອນໄຫວທຸລະກິດທີ່ສຳຄັນ ກັບພາກສ່ວນທີ່ກ່ຽວຂ້ອງກັນ ເຊິ່ງແມ່ນຜູ້ບໍລິຫານສຳຄັນ ປະກອບມີຜູ້ອຳນວຍການ ແລະ ບໍລິສັດທີ່ພົວພັນກັບບຸກຄົນເຫຼົ່ານີ້ກໍ່ຖືເປັນ ພາກສ່ວນທີ່ກ່ຽວຂ້ອງ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງນີ້ໄດ້ເກີດຂຶ້ນຕາມເງື່ອນໄຂ ແລະ ຂໍ້ກຳນົດພື້ນຖານທີ່ໄດ້ຕົກລົງກັນລະຫວ່າງບໍລິສັດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຈຳນວນເງິນ ແລະ ປະເພດຂອງຍອດທີ່ມີສາລະສຳຄັນ ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ແລະ ລາຍການເຄື່ອນໄຫວສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ ສະຫຼຸບໄດ້ດັ່ງຕໍ່ໄປນີ້.

ຍອດໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019:

ຊື່ບັນຊີ/ຊື່ບໍລິສັດ	ສາຍພົວພັນ	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ໜີ້ຕ້ອງສົ່ງໃນການທຸລະກິດ			
ເຈບີ ຮອນດ້າ	(1)	48,971,000	53,510,000
ເຈບີ ຮອນດ້າ ໂນນສະຫວ່າງ	(1)	50,437,000	107,382,000
ເຈບີ ຮອນດ້າ ທ່າງ່ອນ	(1)	11,150,000	42,266,000
		110,558,000	203,158,000
ໜີ້ຕ້ອງສົ່ງອື່ນໆ			
ເຈບີ ຮອນດ້າ	(1)	7,818,000	1,800,000
ເຈບີ ຮອນດ້າ ໂນນສະຫວ່າງ	(1)	5,504,000	5,730,000
ເຈບີ ຮອນດ້າ ທ່າງອນ	(1)	3,918,000	2,388,000
		17,240,000	9,918,000
ດອກເບ້ຍຄ້າງຈ່າຍ			
ທ່ານ ນາງ ອິນທະວິໄລ ອຸດົມ	ຜູ້ຖືຮຸ້ນ ແລະ ຜູ້ອຳນວຍການ	-	15,354,600
ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ	ຜູ້ຖືຮຸ້ນ	-	162,739,500
		-	178,094,100
ເງິນກູ້ຍືມໄລຍະຍາວ			
ທ່ານ ນາງ ອິນທະວິໄລ ອຸດົມ	ຜູ້ຖືຮຸ້ນ ແລະ ຜູ້ອຳນວຍການ	-	2,100,000,000
ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ	ຜູ້ຖືຮຸ້ນ	-	18,000,000,000
		-	20,100,000,000

ລາຍການເຄື່ອນໄຫວ ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ:

ຊື່ບັນຊີ/ຊື່ບໍລິສັດ	ສາຍພົວພັນ	2020 ກີບ	2019 ກີບ
ຂາຍລົດຍົກຈາກລູກຄ້າ			
ເຈບີ ຮອນດ້າ	(1)	-	7,500,000
		-	7,500,000
ຊື້ຊັບສິນເພື່ອການເຊົ່າຊື້			
ເຈບີ ຮອນດ້າ	(1)	2,685,126,000	4,535,220,000
ເຈບີ ຮອນດ້າ ໂນນສະຫວ່າງ	(1)	1,738,117,000	3,502,274,000
ເຈບີ ຮອນດ້າ ທ່າງ່ອນ	(1)	638,867,000	1,243,011,000
		5,062,110,000	9,280,505,000
ລາຍຈ່າຍຄ່ານາຍໜ້າ			
ເຈບີ ຮອນດ້າ	(1)	165,000,000	318,250,000
ເຈບີ ຮອນດ້າ ໂນນສະຫວ່າງ	(1)	109,200,000	233,000,000
ເຈບີ ຮອນດ້າ ທ່າງ່ອນ	(1)	42,900,000	88,750,000
		317,100,000	640,000,000
ລາຍຈ່າຍອື່ນໆ			
ເຈບີ ຮອນດ້າ	(1)	21,300,000	43,470,000
ເຈບີ ຮອນດ້າ ໂນນສະຫວ່າງ	(1)	10,577,500	38,322,500
ເຈບີ ຮອນດ້າ ທ່າງ່ອນ	(1)	14,464,100	1,349,700
		46,341,600	83,142,200
ລາຍຈ່າຍດອກເບ້ຍ			
ທ່ານ ນາງ ອິນທະວິໄລ ອຸດົມ	ຜູ້ຖືຮຸ້ນ ແລະ ຜູ້ອຳນວຍການ	122,228,021	176,981,813
ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ	ຜູ້ຖືຮຸ້ນ	723,288,207	798,634,030
		845,516,228	975,615,843
ລາຍຈ່າຍໃນການຄ้ำປะกัน			
ບໍລິສັດ ມະຫະທຶນ ໂຮນດິ້ງ ຈຳກັດ	ຜູ້ຖືຮຸ້ນ	798,289,206	-
		798,289,206	-

(1) ຜູ້ອຳນວຍການຂອງບໍລິສັດ ແມ່ນຜູ້ຖືຮຸ້ນຂອງວິສາຫະກິດ

ຄ່າຕອບແທນຂອງຜູ້ບໍລິຫານ ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ ປະກອບມີດັ່ງນີ້:

	2020 ກີບ	2019 ກີບ
ຜົນປະໂຫຍດໄລຍະສັ້ນ	598,880,856	633,563,451
	598,880,856	633,563,451

21. ສັນຍາເຊົ່າດຳເນີນງານ

ບໍລິສັດມີພັນທະຜູກພັນຈາກສັນຍາເຊົ່າສຳນັກງານໄລຍະຍາວ ລາຍຈ່າຍຂັ້ນຕ່ຳທີ່ຕ້ອງຈ່າຍໃນອະນາຄົດ ຕາມສັນຍາເຊົ່າໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ໄດ້ສະຫຼຸບໄວ້ດັ່ງນີ້:

	ໃນວັນທີ 30 ກັນຍາ 2020 ກີບ	ໃນວັນທີ 31 ທັນວາ 2019 ກີບ
ພາຍໃນ 1 ປີ	205,160,551	89,087,500
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1,375,994,624	1,443,300,000
ຫຼາຍກວ່າ 5 ປີ	392,972,370	505,450,000
	1,974,127,545	2,037,837,500

ຕາມສັນຍາເຊົ່າ, ຜູ້ໃຫ້ເຊົ່າ ກຳນົດໃຫ້ ບໍລິສັດຈ່າຍຄ່າເຊົ່າລ່ວງໜ້າ 12 ເດືອນ ເປັນການຈ່າຍລ່ວງໜ້າໃນມື້ທີ່ເຮັດສັນຍາ. ສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2020 ແລະ 2019 ຄ່າເຊົ່າຕາມສັນຍາເຊົ່າທີ່ໄດ້ຈ່າຍ ແລະ ຖືກບັນທຶກເປັນລາຍຈ່າຍໃນໃບລາຍງານຜົນໄດ້ຮັບເປັນຈຳນວນເງິນ 294.37 ລ້ານກີບ ແລະ 193.67 ລ້ານກີບ ຕາມລຳດັບ.

22. ການອະນຸມັດການອອກເອກະສານລາຍງານການເງິນການປີ

ເອກະສານລາຍງານການເງິນການປີເຫລ່ານີ້ໄດ້ຮັບການອະນຸມັດ ແລະ ປະກາດໃຊ້ໂດຍຜູ້ອຳນວຍການຂອງບໍລິສັດ ໃນວັນທີ 26 ຕຸລາ 2020.

ທ່ານ ນາມ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ
ວັນທີ 26 ຕຸລາ 2020